# ຕົ້ນໂພ ວັດອາຣາມນະຄອນຫຼວງພຣະບາງ

ຕົ້ນໂພອັນສະງ່າ ອາຍຸຍືນກວ່າຮ້ອຍພັນສາ
ນັ່ງສະມາທິ ດັ່ງໂພທິສະວະ ພວມຈະຕັສຮູ້
ພາບນີ້ ສລັກຢູ່ ໃນຄວາມຊົງຈຳເຮົາ
ພະຕົ້ນໂພທິສານ ທີ່ໂຜດຮົ່ມແລະແຜ່ເຢັນ
ເປັນເຄົ້າເປັນຫຼັກ ເປັນຕົ້ນອັມມະຕະ
ເປັນຜູ້ທີ່ເຫັນ ເປັນຜູ້ທີ່ຮູ້ ຜູ້ທີ່ບັນທຶກ
ຜູ້ທີ່ເກັບ ຜູ້ທີ່ເມດຕາ ຜູ້ທີ່ກະຣຸນາ ຜູ້ທີ່ຮັກສາ
ເຮົາກັບຫວນມາ ຫຼັງຈາກພາກໄປກວ່າຫ້າສິບພັນສາ
ຕົ້ນໂພຍັງຢືນ ຕັ້ງຊື່ດັ່ງຫຼັກ ດັ່ງເກົ່າດັ່ງເດີມ
ຍັງແຜ່ໃບແລະງ່າ ຍັງເຝົ້າວັດອາຣາມບ່ອນເຮົາເຄີຍຜ່ານ
ອາຍຸສັງຂານ ຄ່ອຍທຸເລົາແຮງ
ຕົ້ນໂພໂຜດແຂນໃຫ້ ພະອາທິດ
ໂຜດຜ່ອນຊີວິດ ເພື່ອຕັ້ງສະມາທິ ຈົນຈະຮອດມື້ລາ
ພະຕົ້ນໂພເອີຍ ຍັງຈຳໄດ້ບໍ່ຕອນເຮົາຍ່າງຜ່ານ
ວັດພະວິຊຸນນະຣາຊ ພະທາດໝາກໂມ
ເກັບໝາກຕູມຫອມລົ່ນຕົກລົງດິນ
ຕອນເຮົາແລ່ນເກັບເງິນກີບ ເປັນຜົນຮາກແກ້ວ
ເພີ່ນຫວ່ານ ກາງວັດອາຮາມ ຍາມບຸນສຸນທານ
ຂໍໃຫ້ຕົ້ນໂພ ອາຍຸຍາວຍືນ
ແລະມະຫາສານ ເທົ່າກາລະນານເທີ້ນ

ແຕ່ງໂດຍ ນາງວັນສີ
Texte en lao par Vansy - avril 2020